ກະຊວງກະສິກຳ, ປ່າໄມ້ ແລະ ການປະມົງ ສູນປ້ອງກັນພືດ

# ແຈ້ງການສຳຄັນ

## ຕ້ອງມີໃບຢັ້ງຢືນການກວດກາ
## ເພື່ອນຳເອົາພືດເຂົ້າໄປໃນປະເທດຍີ່ປຸ່ນ.

ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ, ເພື່ອນຳເອົາພືດ* ເຂົ້າໄປໃນປະເທດຍີ່ປຸ່ນຈຳເປັນຕ້ອງໄດ້ຕິດຄັດ**ໃບຢັ້ງຢືນການກວດກາ（Phytosanitary certificate）ທີ່ອອກໂດຍອົງການລັດຖະບານຂອງປະເທດທີ່ສົ່ງອອກ**ແລະ ຕ້ອງຜ່ານການກວດກາການນຳເຂົ້າ.

ມີພືດບາງຊະນິດທີ່ຫ້າມບໍ່ໃຫ້ນຳເອົາເຂົ້າໄປໃນປະເທດຍີ່ປຸ່ນ (ເບິ່ງຄືນທາງດ້ານຫລັງ).

*ນອກຈາກຫມາກໄມ້, ຜັກ, ແລະ ເມັດພືດ, ຍັງປະກອບມີດອກໄມ້ທີ່ຕັດ, ແກ່ນ, ເບ້ຍ, ແລະບາງຜະລິດຕະພັນປຸງແຕ່ງທີ່ເຮັດມາຈາກພືດ.
ນອກຈາກນັ້ນ, ມພືດບາງຊະນິດທີ່ບໍ່ຕ້ອງການໃບຢັ້ງຢືນການກວດກາ (ແຕ່ຍັງຕ້ອງການການກວດກາການນຳເຂົ້າ), ແລະບາງຊະນິດບໍ່ຈຳເປັນຕ້ອງມີໃບຢັ້ງຢືນການກວດກາຫຼືການກວດກາການນຳເຂົ້າ (ເບິ່ງຄືນທາງດ້ານຫລັງ).

ພືດທີ່ບໍ່ມີໃບຢັ້ງຢືນການກວດກາຕິດຄັດ **ຈະຖືກກຳຈັດລະຖິ້ມຕາມກົດໝາຍວ່າດ້ວຍການປ້ອງກັນພືດ**.

ການນຳເຂົ້າໂດຍບໍ່ມີໃບຢັ້ງຢືນການກວດກາຫຼືບໍ່ຜ່ານການກວດກາໃນເວລານຳເຂົ້າອາດຈະຖືກ **ຈຳຄຸກສູງສຸດ 3 ປີ** ຫຼື **ປັບໃໝສູງສຸດ 3,000,000 ເຢນ (ສູງສຸດ 50,000,000 ເຢນສຳລັບນິຕິບຸກຄົນ)**.

**ສັດຕູພືດແລະໂລກຂອງພືດ　ເຝົ້າລະວັງການບຸກລຸກ**

MAFF
Ministry of Agriculture, Forestry and Fisheries
農林水産省

## ⚠ ຊະນິດພືດໝັກໆທີ່ຫ້າມນຳເຂົ້າໄປໃນປະເທດຍີ່ປຸ່ນ

- ໝາກໄມ້ ແລະ ຜັກຫມາກໄມ້ສ່ວນໃຫຍ່ (ເຊັ່ນ: ປະເພດໝາກນາວ ແລະໝາກມ່ວງ) ຈາກປະເທດ ແລະເຂດພື້ນທີ່ທີ່ມີແມງວັນໝາກໄມ້ເມດິເຕີເຣນຽນ ແລະແມງວັນໝາກໄມ້ຕາເວັນອອກ.
- ໝາກແອັບເປີ້ນ, ໝາກເຊີຣີ, ແລະໝາກນົວທີ່ມີເປືອກ ແລະ ອື່ນໆຈາກປະເທດ ແລະ ພາກພື້ນທີ່ມີແມງກະເບື້ອໜອນຄອດລິ້ງ

*ນອກຈາກນັ້ນ, ຍັງໄດ້ຫ້າມນຳເຂົ້າພືດຈຳນວນຫຼາຍຊະນິດຈາກປະເທດແລະພາກພື້ນທີ່ທີ່ມີສັດຕູພືດທີ່ເຮັດໃຫ້ເກີດຄວາມເສຍຫາຍຮ້າຍແຮງໃນທົ່ວໂລກແຕ່ບໍ່ໄດ້ເກີດຂຶ້ນໃນປະເທດຍີ່ປຸ່ນ. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ສູນປ້ອງກັນພືດ.



ແມງວັນຫມາກໄມ້ເມດິເຕີເຣນຽນ



ແມງວັນຫມາກໄມ້ຕາເວັນອອກ



ແມງກະເບື້ອໜອນຄອດລິ້ງ

## ພືດທີ່ບໍ່ຕ້ອງການໃບຢັ້ງຢືນການກວດກາ (⚠ຈຳເປັນຕ້ອງຜ່ານການກວດກາການນຳເຂົ້າ)

ຜະລິດຕະພັນແຫ້ງ ຫຼື ແຊ່ແຂງ ເຊັ່ນ: ໝາກເຜັດຜົງ, ໝາກພິກໄທ, ຫົວຜັກກາດແຫ້ງຕັດເປັນເສັ້ນ, ຕົ້ນຫຍ້າເຊັນໄມ, ໂສມ, ເມັດບົວ, ແກ່ນຜັກຊີດາວ, ຖົ່ວກາເຟຂຽວ, ແລະ ແກ່ນດອກຕາເວັນ (ກິນໄດ້) ທີ່ບໍ່ໄດ້ນຳໃຊ້ເຂົ້າໃນການປູກຝັງ, ອາຫານລ້ຽງສັດ, ປຸ໋ຍ ຫຼືວັດສະດຸການຜະລິດການກະສິກຳ ແລະ ປ່າໄມ້.

*ໝາຍເຫດ: ຈະຕ້ອງຕິດຄັດໃບຢັ້ງຢືນການກວດກາສຳລັບເມັດພືດ (ເຂົ້າ, ເຂົ້າຟ່າງ, ເຂົ້າໂພດ, ໂຊບະ, ປະເພດເຂົ້າສາລີ ແລະ ອື່ນໆ), ພືດຕະກຸນຖົ່ວ (ຖົ່ວເຫຼືອງ, ຖົ່ວອະຊຸກິ, ຖົ່ວດິນ ແລະອື່ນໆ), ໄມ້ແປຮູບ, ເມັດໂກໂກ້, ເມັດງາ, ຫມາກຂາມແຫ້ງ, ຜັກຊີ, ດອກໄມ້ແຫ້ງບາງຊະນິດ, ຢາສະຫມຸນໄພ, ແລະເຄື່ອງເທດ, ສູງສຸດແມ່ນອ່າຈະຕາກໃຫ້ແຫ້ງກໍ່ຕາມ. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ສູນປ້ອງກັນພືດ.

## ລາຍການທີ່ບໍ່ຈຳເປັນຕິດຄັດໃບຢັ້ງຢືນການກວດກາ ຫຼື ການກວດກາການນຳເຂົ້າ

- ໄມ້ແປຮູບ
- ຊາແປຮູບ
- ພືດທີ່ແຊ່ໃນເຫຼົ້າ, ອາຊິດອາເຊຕິກ, ນ້ຳຕານແລະອື່ນໆ.

## ສອບຖາມຂໍ້ມູນຫລັກໄດ້ທີ່ສູນປ້ອງກັນພືດ

- ສູນປ້ອງກັນພືດໂຢໂກຮະມະ ＋８１－４５－２１１－７１５３
- ສູນປ້ອງກັນພືດນາໂກຍາ ＋８１－５２－６５１－０１１２
- ສູນປ້ອງກັນພືດໂກເບ ＋８１－７８－３３１－２３８６
- ສູນປ້ອງກັນພືດໂມຈິ ＋８１－９３－３２１－２６０１
- ຫ້ອງການປ້ອງກັນພືດນາຮາ ＋８１－９８－８６８－２８５０

ການປຶກສາຫາລື https://www.contactus.maff.go.jp/j/pps/form/qa_e.html